ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 132 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 04 ສິງຫາ 2020

# ລັດຖະດຳລັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
## ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງ ກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 06/ສພຊ, ລົງວັນທີ 30 ມິຖຸນາ 2020 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 09/ຄປຈ, ລົງວັນທີ 14 ກໍລະກົດ 2020.

ປະທານປະເທດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1 ປະກາດໃຊ້ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ.

ມາດຕາ 2 ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ

ປະທານປະເທດ

ບຸນຍັງ ວໍລະຈິດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາແຫ່ງຊາດ

ເລກທີ 06 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 30 / 06 / 20

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ ກ່ຽວກັບການຮັບຮອງເອົາ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍ ການເລືອກຕັ້ງສະມາຊິກ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ

ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ ປີ 2015) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 9 ຂອງສະພາແຫ່ງຊາດ ຊຸດທີ VIII ໄດ້ຄົ້ນຄວ້າພິຈາລະນາ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າ ດ້ວຍການເລືອກຕັ້ງສະມາຊິກ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃນວາລະກອງປະຊຸມ ຄັ້ງວັນທີ 30 ມິຖຸນາ 2020.

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 83 /ສພຊ
ນະຄອນຫຼວງວຽງຈັນ, ວັນທີ 30 ມິຖຸນາ 2020

# ກົດໝາຍວ່າດ້ວຍ
# ການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍ
# ການເລືອກຕັ້ງສະມາຊິກ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ

**ມາດຕາ 1 ການປັບປຸງເນື້ອໃນບາງມາດຕາຂອງກົດໝາຍ**

ກົດໝາຍສະບັບນີ້ ກຳນົດເນື້ອໃນການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ເພື່ອໃຫ້ສອດຄ່ອງກັບການຈັດຕັ້ງປະຕິບັດ ພາລະບົດບາດ ແລະ ວຽກງານຕົວຈິງ ດັ່ງນີ້:

**ມາດຕາ 11 ການກຳນົດຈຳນວນສະມາຊິກສະພາ**

ການກຳນົດຈຳນວນສະມາຊິກສະພາ ໃຫ້ປະຕິບັດ ດັ່ງນີ້:

1. ຮັບປະກັນການເຮັດວຽກເປັນໝູ່ຄະນະ;

2. ອີງໃສ່ທີ່ຕັ້ງ, ຄວາມສຳຄັນ, ຄວາມຈຳເປັນ ແລະ ຈຸດພິເສດທາງດ້ານການເມືອງ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ເສດຖະກິດ, ວັດທະນາທຳ-ສັງຄົມຂອງແຕ່ລະແຂວງ, ນະຄອນຫຼວງ, ເມືອງ, ເທດສະບານ, ນະຄອນ;

3. ການກຳນົດຈຳນວນສະມາຊິກສະພາແຫ່ງຊາດ ໃຫ້ເອົາຈຳນວນພົນລະເມືອງເປັນຫົວໜ່ວຍຄິດໄລ່ ຄື ແຂວງທີ່ມີພົນລະເມືອງ ສອງຮ້ອຍຫ້າສິບພັນ ຄົນລົງມາ ໃຫ້ມີສະມາຊິກສະພາແຫ່ງຊາດ ຫົກຄົນ, ແຂວງທີ່ມີພົນລະເມືອງເກີນ ສອງຮ້ອຍຫ້າສິບພັນຄົນ ຂຶ້ນໄປ ໃຫ້ເພີ່ມສະມາຊິກສະພາແຫ່ງຊາດ ໜຶ່ງຄົນ ຕໍ່ພົນລະເມືອງ ຫ້າສິບພັນຄົນ, ແຕ່ສູງສຸດບໍ່ໃຫ້ເກີນ ຊາວຄົນ;

4. ການກຳນົດຈຳນວນສະມາຊິກສະພາປະຊາຊົນ ແຂວງ, ນະຄອນຫຼວງ ໃຫ້ເອົາເມືອງເປັນຫົວໜ່ວຍຄິດໄລ່ ແຕ່ຈຳນວນລວມທົ່ວ ແຂວງ, ນະຄອນຫຼວງ ຕໍ່າສຸດບໍ່ໃຫ້ຫຼຸດ ຊາວຫ້າຄົນ ແລະ ສູງສຸດບໍ່ໃຫ້ເກີນ ຫົກສິບຄົນ.

ຈຳນວນຜູ້ສະໝັກຮັບເລືອກຕັ້ງ ເປັນສະມາຊິກສະພາ ໃຫ້ມີ ເພດ, ເຜົ່າ, ໄວອາຍຸ, ຜູ້ເກົ່າ ແລະ ຜູ້ໃໝ່, ຈາກຫຼາຍສາຂາອາຊີບ ທັງພາກລັດ ແລະ ເອກະຊົນ, ຕົວແທນຂອງບັນດາຊັ້ນຄົນ.

ຄະນະປະຈຳສະພາແຫ່ງຊາດ ເປັນຜູ້ກຳນົດຈຳນວນຜູ້ສະໝັກຮັບເລືອກຕັ້ງ ແລະ ຈຳນວນສະມາຊິກສະພາແຫ່ງຊາດ ແລະ ຈຳນວນສະມາຊິກສະພາປະຊາຊົນຂັ້ນແຂວງ ໃນແຕ່ລະເຂດເລືອກຕັ້ງໂດຍແມ່ນປະທານປະເທດ ເປັນຜູ້ອອກລັດຖະດຳລັດປະກາດ ເປັນທາງການຢ່າງຊ້າ ສີ່ສິບຫ້າວັນ ກ່ອນວັນເລືອກຕັ້ງ.